# ໂຢຊວຍ (ຢາໂຮຊູອາ)

ໃຈຄວາມສຳຄັນຄື : ການຮັບເອົາສິ່ງຂອງທີ່ປະຕິຍານໄວ້

ຂໍ້ຄວາມສຳຄັນ : ບົດ ໑:໙

ຈຳນວນບົດ : ໒໔ ບົດ ເຣື່ອງນີ້ເກີດຂຶ້ນເມື່ອປີ ໑໔໔໑ ຈົນເຖິງປີກ່ອນ ຄ.ສ. ໑໒໒໖

ນາມວ່າ ໂຢຊວຍ ແປວ່າ ພຣະເຈົ້າຊ່ວຍໃຫ້ພົ້ນ

## ໑. ຄຳນຳ

ໜັງສືໂຢຊວຍ ຄືໜັງສືທີ່ເລົ່າເຣື່ອງການເຂົ້າໄປປະເທດການາອານ (ຂານາອັນ) ຂອງພວກອິສຣາເອັນ ເພື່ອປາບປາມສັດຕູແລະເພື່ອຕັ້ງບ້ານເຮືອນຢູ່ໃນປະເທດ ທີ່ພຣະອົງຊົງປະຕິຍານໄວ້ ເຫດການຕ່າງ ໆ ທີ່ຈົດໄວ້ໃນໜັງສືນີ້ເປັນເຣື່ອງທີ່ເກີດຂຶ້ນເປັນເວລານານຫລາຍ ຄືປະມານ ໒໔ ປີຈິ່ງຢຸດລົງ.

ໜັງສືນີ້ຕິດຕໍ່ຈາກພຣະບັນຍັດທີ ໒ ເໝືອນເປັນໜັງສືກິຈການຕໍ່ຈາກໜັງສືຂ່າວປະເສີດທັງ ໔. ໜັງສືໂຢຊວຍມີຂໍ້ຄວາມຄ້າຍ ໆ ກັນກັບໜັງສືເອເຟດ ສນັ້ນເພື່ອຈະໃຫ້ເຂົ້າໃຈໜັງສືນີ້ດີແລະເພື່ອຈະເອົາບົດຮຽນຈາກໜັງສືນີ້ ກໍຕ້ອງອ່ານໜັງສືເອເຟດນຳດ້ວຍ.

## ໒. ວ່າດ້ວຍຜູ້ຂຽນ

ຢາໂຮຊູອາ ຜູ້ຂຽນໜັງສືນີ້ ເປັນເໝືອນ ແມ່ທັບ ຜູ້ມີອຳນາດ ເພາະ

ການເຊື່ອຟັງພຣະຄຳຂອງພຣະເຈົ້າ ສິ່ງທີ່ທ່ານໂມເຊໄດ້ກະທຳໄວ້ ໂຢ-ຊວຍກໍໄດ້ເຮັດໃຫ້ສຳເຣັດ ທ່ານ ໂມເຊ ໄດ້ນຳພົລະເມືອງຜ່ານທະເລແດງ ເພື່ອໃຫ້ພົ້ນຈາກຄວາມເປັນທາດ ສ່ວນ ປາໂຣຊູອາ ກໍໄດ້ນຳພົລະເມືອງ ຜ່ານແມ່ນ້ຳ ຢູລະເດນ ເພື່ອຈະນຳ ພວກເຂົາໄປຍັງປະເທດທີ່ຊົງປະຕິຍານໄວ້.

ໂມເຊ ປຽບເໝືອນພຣະບັນຍັດ ຊຶ່ງຊ່ວຍມະນຸດໃຫ້ມີຊີວິດສົມບູນບໍ່ໄດ້ ປາໂຣຊູອາ ປຽບເໝືອນພຣະເຢຊູ ຜູ້ໂຜດປະທານຊີວິດສົມບູນໃຫ້

ฃ. ເຫດທີ່ຊ່ວຍໃຫ້ ໂຢຊວຍ ມີຄວາມຈຳເຣີນ

໑. ເພາະ ໂຢຊວຍ ເຊື່ອຟັງພຣະທັມຂອງພຣະເຈົ້າ (ບົດ ໑:໗; ຜ:໘–໗)

໒. ເພາະ ໂຢຊວຍ ເຊື່ອໃນອຳນາດຂອງພຣະເຈົ້າ

໓. ເພາະ ໂຢຊວຍ ມີໃຈກ້າແລະມີຄວາມພຽນ

໔. ເພາະ ໂຢຊວຍ ເປັນທະຫານດີ

໔. ຄວາມໝາຍຕ່າງໆ

ກ. ການຜ່ານແມ່ນ້ຳຢູລະເດນ ແມ່ນ້ຳຢູລະເດນ (ຍໍດາເນ) ໝາຍເຖິງຄວາມຕາຍຫລື ເຊັ່ນດຽວກັນກັບສະພາບເດີມຂອງດິນ (໒ ກະລັດ ໕:໑–໑໔; ລືກາ ໓:໓–

໑ກ) ສມັຍການຂ້າມແມ່ນ້ຳຢູລະເດນນີ້ໝາຍເຖິງຄາວທີ່ຢູ່ກິນໃນກາງປ່າໄດ້ສິ້ນສຸດລົງ.

ຫີນສັບບາ ທີ່ວ່າພວກປະໂລຫິດຫາມຫີນນີ້ຂ້າມແມ່ນ້ຳໄປກ່ອນພວກອິສຣາເອັນນັ້ນ ໝາຍເຖິງພຣະເຢຊູຜູ້ຊົງໄຂທາງໃຫ້ພວກເຮົາເຂົ້າໄປເຖິງພຣະເຈົ້າ.

ຫນາກຫີນ ໑໒ ຫນ່ວຍຢູ່ກາງແມ່ນ້ຳ ໃນບົດ ໔:໙ ມີຄວາມໝາຍເຖິງສະພາບຄົນເກົ່າທີ່ຖືກຝັງໄວ້ດ້ວຍກັນກັບພຣະເຢຊູ (ໂກໂລດ ໓:໙, ຄາລາຊີ ໒:໒໐)

ຫນາກຫີນ ໑໒ ຫນ່ວຍຢູ່ບ່ອນຢຸດພັກ ໃນບົດທີ ໔:໘ ມີຄວາມໝາຍເຖິງສະພາບໃໝ່ (ໂກໂລດ ໓:໑໐) ທີ່ພົ້ນຈາກຄວາມຕາຍມີຊີວິດຢູ່ດ້ວຍກັນກັບພຣະເຢຊູ.

ຂ. ເມືອງການາອານ ຄືດິນແດນທີ່ພຣະເຈົ້າຊົງປະຕິຍານວ່າຈະຍົກໃຫ້ພວກອິສຣາເອັນ ກ່ອນພວກອິສຣາເອັນຈະເຂົ້າໄປໃນເມືອງການາອານ ພວກເຂົາຕ້ອງຣົບຣາຂ້າຟັນພວກສັດຕູຕາມຄຳສັ່ງຂອງພຣະເຈົ້າ ການຣົບຣາຂ້າຟັນນີ້ປຽບເໝືອນຄົນທີ່ເຊື່ອຕໍ່ສູ້ພະຍາມານ (ເອເຟດ ໖:໑໐–໑໘)

ຄ. ພວກສັດຕູທີ່ເມືອງການາອານ ຢູ່ປະເທດການາອານມີຫລາຍຊົນຊາດດ້ວຍກັນ ສມັຍພຣະເຈົ້າຈຶ່ງຊົງສັ່ງໃຫ້ພວກອິສຣາເອັນຂັບໄລ່ຄົນພວກນີ້(ຈົດເຊັນບັນຊີ ໓໓;໕໒)

ແລະຊົງຫ້າມບໍ່ໃຫ້ທຳສັນຍາກັບພວກເຂົາ (ອົພຍົກ ໒໓:໓໒ –໓໓) ແຕ່ຊົງອະນຸຍາດໃຫ້ທຳລາຍເສັຍຈົນໝົດສິ້ນ. ພວກສັດຕູ ທີ່ປຽບເໝືອນກັບ ຄວາມຊົ່ວຮ້າຍອະທັມ ຊຶ່ງພວກເຮົາຈະຕ້ອງຕໍ່ສູ້ແລະທຳລາຍມັນເສັຍ.

ງ. ການຍາດຊິງເອົາເມືອງເຢຣິໂກ (ເຢຣິໂຂ) ໃນບົດທີ ໖ ນັ້ນ ບໍ່ແມ່ນວ່າ ຍາດຊິງເອົາ ດ້ວຍການຮົບເຮວແຕ່ ດ້ວຍການເປົ່າແກແລະໂຫ່ຮ້ອງເທົ່ານັ້ນ ແຕ່ຫາກມີຄວາມເຊື່ອຈຶ່ງໄດ້ໄຊຊນະ.

ຈ. ການເສັຍໄຊເມືອງອາອີ ໃນບົດທີ ໗ ໝາຍຄວາມວ່າ ເມື່ອເວລາຜິດຄຳສັ່ງຂອງພຣະເຈົ້າ ກໍເລີຍເກີດມີແນວມາຂັດຂວາງແລະຫ້າມພຣະພອນຂອງພຣະເຈົ້າ ສນັ້ນຈຶ່ງເສັຍໄຊໃຫ້ແກ່ເມືອງນີ້

ສ. ນາງຣະຮາບ ໃນບົດທີ ໒ ປຽບເໝືອນຜູ້ມີສ່ວນໃນພຣະຄຸນຂອງພຣະເຈົ້າກັບພວກອິສຣາເອັນ ສາຍເສັ້ນແດງທີ່ເພິ່ນ ເອົາໃສ່ ບ່ອງຢ້ຽມ ໝາຍຄິດເຖິງ ເລືອດທີ່ ໄດ້ທາປະຕູທີ່ເມືອງເອຢິບ ເຣື່ອງນີ້ປາກເຖິງການໄຖ່ໂທດທີ່ປະກົດຢູ່ທົ່ວພຣະຄັມພີ (ເຮັບເຣີ ໑໑:໓໑, ມັດທາຍ ໑:໕, ລູກາ ໒໔:໔໗, ກິຈການ ໒:໓໘)

ຊ. ການຮັບພິທີຕັດໜັງຫໍ້ລັບ ໃນບົດ ໕ ເປັນຄວາມ

ພາຍເຖິງ ຄຳສັນຍາ ຂອງພຣະເຈົ້າ ທີ່ມີຕໍ່ພວກ ອິສຣາເອັນຄື
ແຕ່ນີ້ໄປພວກເຂົາຈະໄດ້ເປັນຜູ້ບໍຣິສຸດ (ໂຣມ ໑໒:໑)

໕. ບົດສຳຄັນ

ບົດທີ ໑ ມີສອດແນມສອງຄົນເຂົ້າໄປໃນເມືອງເຢຣິໂກ
,, ໓–໔ ການຜ່ານແມ່ນ້ຳຢູລະເດນ
,, ໖ ການຍາດຊີງເອົາເມືອງເຢຣິໂກ
,, ໗ ບາບຂອງອາການ
,, ໒໐ ທີ່ຢູ່ອາໄສທັງ ໖
,, ໒໔ ຄຳເທສນາຂອງໂຢຊວຍ

໖. ພາບແບ່ງປັນພາກ

ພາກທີ ໑ ການຕຽມຕົວແລະການເຂົ້າໄປໃນປະເທດ
ການາອານ ບົດ ໑–໕
,, ໒ ການມີໄຊຊະນະຕໍ່ພວກສັດຕູ ບົດ ໖–໑໒
,, ໓ ໂຢຊວຍໄດ້ແບ່ງຂັ້ນບ້ານເມືອງແກ່
໑໒ ຕະກູນ ບົດ ໑໓–໒໒
,, ໔ ຄຳເທສນາສຸດທ້າຍແລະຄວາມຕາຍຂອງ
ໂຢຊວຍ ບົດ ໒໓–໒໔